## ສະລູບຄວາມຂອງການບໍຣິການ

### ການພິຈາຣະນາເບິ່ງເງື່ອນໄຂຮັບເອົາ

ການທຳການສຳພາດຄຳຮ້ອງໃຫ້ແລ້ວແລະການເກັບກຳເອົາຫລັກຖານພິສູດທີ່ຈຳເປັນເພື່ອຈະພິຈາຣະນາເບິ່ງເງື່ອນໄຂຮັບເອົາສະວັດດີການ.

### ການບຳຣຸງສ້ອມແຊມສຳນວນເອກສານ

ຊ່ວຍເຫລືອຜູ້ໂທມາຜູ້ທີ່ລາຍງານການປ່ຽນແປງໃນຣາຍໄດ້, ຂະນາດຂອງຄອບຄົວ,ທີ່ຢູ່, ສະພາບເອກສານ,ອື່ນໆ.

ຊ່ວຍເຫລືອຜູ້ໂທມາຜູ້ທີ່ເຂົ້າເຖິງການບໍຣິການຄວບຄຸມນຳສຳນວນເອກສານ.

### ການສອບຖາມເບິ່ງຂອງລູກຄ້າ

ຕອບຄຳຮ້ອງຂໍເອົາຣາຍຣະອຽດທົ່ວໄປແລະການສົ່ງຕໍ່.

### ການອູ້ມຊູດ້ານພາສາ

ລາຍການໂທຣະສັບທັງຫມົດມີໄວ້ໃຫ້ເປັນພາສາອັງກິດ,ສະແປນິຊ, ຣັດເຊັຽແລະວຽດນາມ. ພວກເຮົາຍັງເອົາການບໍຣິການແປພາສາໃຫ້ອີກຄືກັນສຳລັບພາສາສ່ວນຫລາຍໂດຍບໍ່ຄິດຄ່າ.

### ຫນ່ວຍຖ່າຍພາບ

ເອກສານທຸກໆຢ່າງຈະຖືກ:

- ສົ່ງອີແມລ໌ຜ່ານປະຕູອີແມລ໌ປອດພັຍMyDocs;ໂທຫາສູນກາງປະຊາສັມພັນເພື່ອຮ້ອງຂໍເອົາອີແມລ໌ເຊີນໃຫ້ກໍ່ຕັ້ງປະຕູປອດພັຍຂອງທ່ານ.
- ແຟກຊ໌ໄປຫາເລກໂທຟຣ1-888-338-7410.
- ສົ່ງທາງໄປສະນີໄປຫາ: PO Box 11699 Tacoma WA 98411-9905.
- ປ່ອນໃສ່ບອກ໌ປ່ອນໄວ້ຢູ່ຕາມຫ້ອງການ DSHS ທ້ອງຖິ່ນຂອງທ່ານ.

## ຈຸດມຸ່ງຫມາຍຂອງພວກເຮົາ

*ເພື່ອຈະປ່ຽນແປງຊີວິດໂດຍການ*
*ໃຫ້ພະລັງດູນໃຈແກ່ບຸກຄົນ ແລະ ຄອບຄົວ*
*ເພື່ອຈະປະສົບຜົນສຳເຣັດໂດຍຜ່ານການ*
*ຂະຍາຍການເຂົ້າເຖິງປະຊາຊົນຂອງ*
*ຣັດວໍຊິງຕັນ.*

ຕິດຕາມພວກເຮົາ

www.facebook.com/WAStateDSHS

www.twitter.com/@waDSHS


**Washington State**
**Department of Social and Health Services**
**Community Services Division**
**Customer Service Contact Center**

PO Box 11699 • Tacoma, WA 98411-9905
ເລກໂທຟຣີ: 1-877-501-2233
TTY: 1-800-209-5446 ຫລື 711
ແຟກຊ໌: 1-888-338-7410
dshs.wa.gov


**Mobile Community Services Office**

www.dshs.wa.gov/MobileOffice

www.facebook.com/dshsmobileoffice

Customer Connect
DSHS COMMUNITY SERVICES DIVISION

Washington State Department of Social & Health Services
*Transforming lives*


(DSHS 22-1628 Rev. 8/23) Laotian


# Customer Service Contact Center



Washington State Department of Social & Health Services
*Transforming lives*

# ຂອບເຂດຂອງການບໍລິການ

## ຄຳຮ້ອງຂໍສຳລັບ

- ອາຫານຈຳເປັນ
- ການຊ່ວຍເຫລືອເງິນສົດ
  - ການຊ່ວຍເຫລືອຊົ່ວຄາວສຳລັບຄອບຄົວຂັດສົນ
  - ຄົນແກ່ຊະລາ, ຕາບອດ ຫລື ເສັຽອົງຄະ
  - ບ່ອນຢູ່ອາສັຍແລະຄວາມຕ້ອງການຈຳເປັນ
  - ການຊ່ວຍເຫລືອເງິນສົດສຸກເສີນ
  - ການຊ່ວຍເຫລືອເງິນສົດຄົນອົພຍົບ
- ການພະຍາບານແຄລສຊິກ
  - ການຄຸ້ມກັນພະຍາບານສຳລັບບຸກຄົນຜູ້ທີ່ຕາບອດ, ເສັຽອົງຄະ ຫລືອາຍຸກາຍເກີນ 65 ປີ.
  - ໂຄງການປະຢັດເງິນເພື່ອຊ່ວຍໃນການຈ່າຍຄ່າທຳນຽມ ຂອງ Medicare.

## ການບໍລິການທີ່ກ່ຽວພັນນຳ

- ການສຳພາດທວນຄືນເບິ່ງເງື່ອນໄຂຮັບເອົາ/ການອະນຸມັດກາງເວລາສຳລັບທຸກໆໂຄງການ
- ແຫລ່ງຊ່ວຍເຫລືອ ແລະ ການສົ່ງຕໍ່
- ການຄວບຄຸມນຳສຳນວນເອກສານທາງລາຍນ໌
  - ການຟັງການຮຽນຮູ້ໂຄງການ WorkFirst
  - ແຜນການຮັບຜິດຊອບສ່ວນບຸກຄົນ
  - ການປະເມີນຜົນການບໍລິການສັງຄົມຂອງ WorkFirst
  - ການສຳພາດ ABD/HEN
- ຄຳຖາມກ່ຽວຂ້ອງນຳສຳນວນເອກສານ



# ຈະເຂົ້າເຖິງການບໍລິການໄດ້ແນວໃດ

ໂທຫາ 1-877-501-2233 ວັນຈັນ-ວັນສຸກ,ຍົກເວັ້ນວັນພັກບຸນ,ເພື່ອຈະຕິດຕໍ່ຫາຕົວແທນຂອງ Customer Service Contact Center ເພື່ອຈະ:

- ຮ້ອງຂໍເອົາສະວັດດີການ,ທຳການສຳພາດຫລື ການທວນຄືນເບິ່ງໃຫ້ແລ້ວຕັ້ງແຕ່ 8 a.m. ຫາ 2 p.m.
- ລາຍງານການປ່ຽນແປງຕັ້ງແຕ່ 8 a.m. ຫາ 2 p.m.
- ໄດ້ຮັບຣາຍຣະອຽດຫລືຖາມຄຳຖາມກ່ຽວກັບສຳນວນເອກສານຂອງທ່ານຕັ້ງແຕ່ 8 a.m. ຫາ 5 p.m.
- ເວົ້ານຳຜູ້ຊ່ຽວຊານ WorkFirst ຫລືຜູ້ຊ່ຽວຊານການບໍລິການສັງຄົມສຳລັບການຄວບຄຸມນຳເອກສານຕັ້ງແຕ່ 8 a.m. ຫາ 2 p.m.
- ໄດ້ຮັບຣາຍຣະອຽດອັດຕະໂນມັດທີ່ມີໄວ້ໃຫ້ 24 ຊົ່ວໂມງຕໍ່ວັນໂດຍການເລືອກເອົາທາງເລືອກ Customer Connect.

# ແຫລ່ງຊ່ວຍເຫລືອ

ເພື່ອຈະກວດເບິ່ງເງິນຍັງເຫລືອໃນ EBT ຂອງທ່ານ, ປ່ຽນເລກ pin ຂອງທ່ານແລະລາຍງານບັດເສັຽຫລືຖືກຂະໂມຍໄປ: 1-888-328-9271

ເພື່ອຈະລາຍງານການສໍ້ໂກງ:
1-800-562-6906
www.dshs.wa.gov/dshs-contact-us

ຄຳຖາມກ່ຽວກັບ Provider One/ ການຄຸ້ມກັນສະວັດດີການ,ການສົ່ງໃບບິນເກັບເງິນແລະການທວງເອົາເງິນ,ການເຮັດບັດໃຫມ່ແທນ:
1-800-562-3022
www.hca.wa.gov

Community Resource Information Line: 211
www.211.org

# ການເຂົ້າຫາການບໍລິການ

## Washington Connection

Washington Connection ແມ່ນປະຕູເຂົ້າຫາສະວັດດີການທາງອອນລາຍນ໌ບ່ອນທີ່ຄອບຄົວ ແລະບຸກຄົນສາມາດຮ້ອງຂໍເອົາໄດ້ຢ່າງງ່າຍໆສຳລັບການບໍລິການແລະສະວັດດີການມາກມາຍຫລາຍຢ່າງເຊັ່ນວ່າອາຫານ,ເງິນສົດ,ການຊ່ວຍເຫລືອພະຍາບານ,ເງິນເສັຽຊ່ວຍການຝາກເດັກແລະການບໍລິການແລະການອູ້ມຊູການປິ່ນປົວຣະຍະຍາວ.



ທ່ານສາມາດກໍ່ຕັ້ງບັນຊີ Client Benefit Account ຂື້ນມາເພື່ອຈະລາຍງານການປ່ຽນແປງ,ການເຂົ້າຫາຈຳນວນເງິນສະວັດດີການຂອງທ່ານແລະເຮັດການສຳພາດທວນຄືນໃຫ້ແລ້ວໄດ້ທີ່ washingtonconnection.org.

ທ່ານຍັງສາມາດຄົ້ນຫາແຫລ່ງຊ່ວຍເຫລືອ,ໂຄງການແລະການບໍລິການທີ່ຖືກເອົາໃຫ້ໂດຍຫ້ອງການຮ່ວມງານຂອງພວກເຮົາຫລາຍໆຫ້ອງການ.

## Washington State Combined Application Project, WASHCAP

ໂຄງການສະວັດດີການອາຫານງ່າຍໆສຳລັບຜູ້ຮັບເງິນຄວາມປອດພັຍຂອງສັງຄົມໂສດສ່ວນຫລາຍ. WASHCAP ສາມາດຖືກຕິດຕໍ່ຫາໄດ້ວັນຈັນ-ວັນສຸກຕັ້ງແຕ່ 8 a.m. – 5 p.m., ຍົກເວັ້ນວັນພັກບຸນ,ໄດ້ທີ່ເລກ 1-877-380-5784.